ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 2326/ກພສ

ນະຄອນຫຼວງວຽງຈັນ,ວັນທີ 09 AUG 2011

# ແຈ້ງການ

ເຖິງ: - ພະແນກການອ້ອມຂ້າງກົມພາສີ, ພາສີປະຈຳເຂດ ແລະດ່ານພາສີໃນທົ່ວປະເທດ.

- ບັນດາຜູ້ປະກອບການທີ່ນຳເຂົ້າ-ສົ່ງອອກ.

ເລື່ອງ: ແຜນການຫຼຸດຜ່ອນຈຳນວນລາຍການສິນຄ້າທີ່ກຳນົດມູນຄ່າແຈ້ງພາສີຕາມລາຄາກາງ ແລະໂຄງສ້າງດ້ານລາຄາແຕ່ ປີ2011—2013 (ຕາມປີປະຕິທິນ).

- ອີງຕາມ ແຈ້ງການຂອງກົມພາສີ ສະບັບເລກທີ 2040 ລົງວັນທີ 15/07/2011 ວ່າດ້ວຍ ການກຳນົດ ມູນຄ່າແຈ້ງພາສີ ສຳລັບການນຳເຂົ້າສິນຄ້າໃຊ້ສອຍທົ່ວໄປ.

ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການໃນການນຳເຂົ້າສິນຄ້າເຄື່ອງຂອງ ແລະ ທັງເປັນເງື່ອນໄຂໃນການກະກຽມນຳໃຊ້ລາຄາຊື້-ຂາຍຕົວຈິງ ຂອງອົງການການຄ້າໂລກ WTO.

ກົມພາສີໄດ້ກຳນົດແຜນການຫຼຸດຜ່ອນຈຳນວນລາຍການສິນຄ້າຈຳນວນ ***29 ລາຍການ ສຳລັບປີ 2011, 19 ລາຍການ ສຳລັບປີ 2012, 01 ລາຍການສຳລັບປີ 2013*** ທີ່ນຳໃຊ້ລາຄາອ້າງອີງຕ່ຳສຸດເພື່ອແຈ້ງເສຍພາສີ ຕາມຕາຕະລາງດັ່ງລຸ່ມນີ້ :

| ລ/ດ | ປະເພດສິນຄ້າ | ລະຫັດ ສິນຄ້າ | ແຜນການປະຕິບັດ | | | ໝາຍ ເຫດ |
|---|---|---|---|---|---|---|
| | | | 2011 | 2012 | 2013 | |
| I | <u>ປະເພດພາຫະນະ</u> | | | | | |
| 1 | ລົດເກັງທຸກຊະນິດ | 8703.21 | ລາຄາກາງ | ລາຄາກາງ | ລາຄາຊື້-ຂາຍຕົວຈິງ | |
| 2 | ລົດກະບະ ທຸກຊະນິດ | 8704.21 | ລາຄາກາງ | ລາຄາກາງ | ລາຄາຊື້-ຂາຍຕົວຈິງ | |
| 3 | ລົດຕູ້16 ບ່ອນນັ່ງລົງມາ | 8702.10 | ລາຄາກາງ | ລາຄາກາງ | ລາຄາຊື້-ຂາຍຕົວຈິງ | |
| 4 | ລົດຈິບ ທຸກຊະນິດ | 8703.10 | ລາຄາກາງ | ລາຄາກາງ | ລາຄາຊື້-ຂາຍຕົວຈິງ | |
| II | <u>ປະເພດສິນຄ້າ ຊັ້ນສູງ,ຟຸມເຟືອຍ</u> | | | | ລາຄາຊື້-ຂາຍຕົວຈິງ | |
| 5 | ເຫຼົ້າວິສະກີຈອນນີແດງ | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 6 | ເຫຼົ້າວິສກີ້ຈອນນີ້ດຳ | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 7 | ເຫຼົ້າວິສກີ້ທີ່ມີລາຄາຕ່ຳກວ່າຈອນນີແດງ | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 8 | ເຫຼົ້າວິສກີ້ຈອນນີ Green Label | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 9 | ເຫຼົ້າວິສກີ້ຈອນນີ Gold Label | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 10 | ເຫຼົ້າວິສກີ້ຈອນນີ Blue Label | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 11 | ເຫຼົ້າ ວິສກີ້ຈອນນີ Ballantine 21 ປີ | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 12 | ເຫຼົ້າ ວິສກີ້ຈອນ Ballantin 30 ປີ | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 13 | ເຫຼົ້າ ໂກຍັກ VS | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 14 | ເຫຼົ້າ ໂກຍັກ VSOP | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 15 | ເຫຼົ້າ ໂກຍັກ XO | 2208.30.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 16 | ເຫຼົ້າແວງແກ້ວ ( AOC ) ຫລື ທຽບເທົ່າຂຶ້ນໄປ | 2208.20.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |

| | | | | | | |
|---|---|---|---|---|---|---|
| 17 | ເຫຼົ້າແວງກະຕຸກ | 2208.20.10 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| 18 | ເຄື່ອງດື່ມຕ່າງໆ | 2208.90.70 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 19 | ເບຍທຸກຊະນິດ | 2203.00.90 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 20 | ນ້ຳໝາກໄມ້ທຸກຊະນິດ,ເຄື່ອງດື່ມເກືອແຮ່ | 2202.90.30 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 21 | ໂສດາຈືດ (Tonic ) | 2202.10.90 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 22 | ເຄື່ອງດື່ມຊູກຳລັງ | 2202.12.90 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 23 | ເຄື່ອງດື່ມທີ່ມີທາດເຫຼົ້າບໍ່ເກີນ 7% | 2204.20.11 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 24 | ຄຳແທ່ງ | 7108.12.90 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 25 | ເງິນແທ່ງ | 7106.91.00 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 26 | ໂມງ | 9101.19.00 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 27 | ໂທລະສັບມືຖືທຸກຊະນິດ | 8517.11.00 | ລາຄາເດັດຖານ | GATT | ລາຄາຊື້-ຂາຍຕົວຈິງ | |
| 28 | ຢາສູບທຸກປະເພດ | 2402.20.90 | ລາຄາເດັດຖານ | ລາຄາເດັດຖານ | ລາຄາຊື້-ຂາຍຕົວຈິງ | |
| III | **ປະເພດນ້ຳມັນເຊື້ອໄຟ** | | | | | |
| 29 | ນ້ຳມັນເຊື້ອໄຟທຸກຊະນິດຍົກເວັ້ນນ້ຳມັນ | | ລາຄາກາງ | ລາຄາກາງ | ລາຄາກາງ | ປະຕິບັດ ຕາມໂຄງ ສ້າງດ້ານ ລາຄາໃນ ແຕ່ລະໄລ ຍະ.ບໍ່ໄດ້ ເອົາເຂົ້າ ໃນລາຍ ການກຳນົດ ລາຄາຊື້ ຂາຍຕົວຈິງ |
| | ໜື່ນ,ໝຽວ. | | | | | |
| | ນ້ຳມັນແອັດຊັງ | 2710.11.14 | ລາຄາກາງ | ລາຄາກາງ | ລາຄາກາງ | |
| | ນ້ຳມັນກາຊວນ | 2710.19.32 | ລາຄາກາງ | ລາຄາກາງ | ລາຄາກາງ | |
| | | | | | | |
| | ລວມຈຳນວນລາຍການທີ່ໃຊ້ລາຄາກາງແຕ່ລະປີ | | **29 ລາຍການ** | **19 ລາຍການ** | **01 ລາຍການ** | |

ກ. ຕາຕະລາງປະເພດພາຫະນະຈະໄດ້ມີການກຳນົດລາຄາແຈ້ງພາສີ ສຳລັບປີ 2012 ເປັນອັນສະເພາະ ບົນພື້ນຖານການອະນຸມັດຈາກລັດຖະມົນຕີກະຊວງການເງິນ.

ຂ. ສຳລັບລາຄາໃນການກຳນົດສິນຄ້າປະເພດຊັ້ນສູງຟຸມເຟືອຍແມ່ນກຳນົດຕາມລັດຖະບັນຍັດ ເລກທີ03/ປປທ ລົງວັນທີ 18 ພະຈິກ ປີ 2009 ແລະ ແຈ້ງການຂອງຄະນະເລຂາທິການລັດຖະບານສະບັບເລກທີ 151/ຄລບ ລົງວັນທີ 24/01/2011.

ຄ. ສ່ວນລາຄາສຳລັບນ້ຳມັນເຊື້ອໄຟແມ່ນກຳນົດຕາມລາຄາໂຄງສ້າງທີ່ລັດຖະບານໄດ້ອານຸມັດ ແລະ ຮັບຮອງ ໃນແຕ່ລະໄລຍະ.

ດັ່ງນັ້ນ, ກົມພາສີຈຶ່ງໄດ້ກຳນົດແຜນການຫຼຸດຜ່ອນຈຳນວນລາຍການສິນຄ້າທີ່ຈະກຳນົດລາຄາອ້າງອີງ ( ລາຄາຕ່ຳສຸດ ) ຕາມຕາຕະລາງຂ້າງເທິງເພື່ອ ແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງ ປະຕິບັດ.

ແທນ ຫົວໜ້າກົມພາສີ

ບຸນໂຈມ ອຸບົນປະເສີດ